ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
=====000=====

ກະຊວງສາທາລະນະສຸກ
ກອງເລຂາຄະນະກຳມະການປະສານງານ
ກອງທຶນໂລກຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ
ສປປ ລາວ

# ບົດບັນທຶກກອງປະຊຸມ
# ຄະນະກຳມະການປະສານງານກອງທຶນໂລກ

ກອງປະຊຸມຄັ້ງນີ້ ໄດ້ຈັດຂຶ້ນເປັນຄັ້ງທີ 03 ຂອງສົກປີ 2019-2020 ໃນວັນພຸດ ທີ 27 ພຶດສະພາ 2020 ເວລາ 09:00 ຫາ 12:00 ທີ່ຫ້ອງປະຊຸມຊັ້ນ 6 ກະຊວງສາທາລະນະສຸກ (ຕຶກໃໝ່) ໂດຍການເປັນປະທານຂອງ ທ່ານ ນາງ ດຣ. ສຸລານີ ຈັນສີ, ຮອງຫົວໜ້າກອງສົ່ງເສີມສຸຂະພາບຊຸມຊົນ ອົງການກາແດງລາວ ທັງເປັນຮອງປະທານຄະນະກຳມະການປະສານງານ ກອງທຶນໂລກ.

ກອງປະຊຸມຄັ້ງນີ້ໄດ້ປະກອບມີຫຼາຍພາກສ່ວນຜູ້ເຂົ້າຮ່ວມເຊັ່ນ: ສະມາຊິກ ແລະ ຕົວແທນ ຂອງຄະນະກຳມະການປະສານງານກອງທຶນໂລກ (CCM) ຈຳນວນ 20 ທ່ານ (ມີສິດອອກສຽງໄດ້ 18 ທ່ານ) ແລະ ພາກສ່ວນອື່ນໆຈຳນວນ 24 ທ່ານ ເຊິ່ງຕາງໜ້າຈາກ ຄະນະກຳມະການກວດກາຂອງ CCM, ຄະນະກຳມະການຂົນຂວາຍແຫຼ່ງທຶນຂອງ CCM, ຜູ້ຕາງໜ້າຈາກກົມແຜນການ ແລະ ຮ່ວມມື ກະຊວງສາທາລະນະສຸກ, ໂຄງການ 3 ພະຍາດ, ໜ່ວຍງານບໍລິຫານຄຸ້ມຄອງໂຄງການກອງທຶນໂລກ, ບັນດາຄູ່ຮ່ວມງານ ແລະ ກອງເລຂາ CCM, ລວມທັງໝົດ 44 ທ່ານ.

## I. ວາລະກອງປະຊຸມ:

1. ທົບທວນ ແລະ ພິຈາລະນາເພື່ອຮັບຮອງເອົາຮ່າງບົດສະເໜີຂໍທຶນຈາກກອງທຶນໂລກເພື່ອນຳໃຊ້ເຂົ້າໃນວຽກງານຕ້ານພະຍາດ COVID-19
2. ທົບທວນ ແລະ ພິຈາລະນາເພື່ອຮັບຮອງເອົາຜົນຂອງການຄັດເລືອກພາກສ່ວນທີ່ຈະຈັດຕັ້ງປະຕິບັດໂຄງການ RAI ໃນຮອບວຽນອະນຸມັດການຊ່ວຍເຫຼືອຈາກກອງທຶນໂລກ ປີ 2021-2023
3. ບັນຫາອື່ນໆ:
   - ຜົນຂອງການທົບທວນແລະຂໍ້ແນະນຳຂອງຄະນະວິຊາການກອງທຶນໂລກ ຕໍ່ກັບບົດສະເໜີຂໍທຶນຮ່ວມຂອງແຜນງານຄວບຄຸມວັນນະໂລກ ແລະ ພະຍາດເອດ ຂອງ ສປປ ລາວ ເພື່ອເຂົ້າສູ່ຂັ້ນຕອນການຕົກລົງໃຫ້ການຊ່ວຍເຫຼືອ.

## II. ສະຫຼຸບສັງລວມບັນດາຈຸດສຳຄັນຂອງກອງປະຊຸມ:

ກ່ອນຈະກ້າວເຂົ້າວາລະກອງປະຊຸມ ກອງເລຂາ CCM ໄດ້ຢືນຢັນອົງປະກອບຂອງກອງປະຊຸມແມ່ນພຽງພໍ ແລະ ໄດ້ກຳນົດຂໍ້ຂັດແຍ້ງດ້ານຜົນປະໂຫຍດ (COI) ສຳລັບວາລະທີ່ 2 ຄືມີຜູ້ຕາງໜ້າຈາກໂຄງການ HPA ແມ່ນບໍ່ສາມາດລົງຄະແນນສຽງ ແລະ ຮັບຮອງຜົນຂອງການຄັດເລືອກຜູ້ຮັບຍ່ອຍ (SR) ສຳລັບການຈັດຕັ້ງປະຕິບັດທຶນຊ່ວຍເຫຼືອຂອງໂຄງການ RAI ໃນໄລຍະປີ 2021-2023 ຍ້ອນວ່າ HPA ໄດ້ຖືກຄັດເລືອກໃຫ້ເປັນ SR ສຳລັບທຶນຊ່ວຍເຫຼືອຮອບນີ້.

ພ້ອມດຽວກັນນີ້ ກອງເລຂາ CCM ກໍ່ໄດ້ລາຍງານໃຫ້ກອງປະຊຸມຊາບກ່ຽວກັບການຕິດຕາມການຈັດຕັ້ງປະຕິບັດໜ້າວຽກຕາມທີ່ໄດ້ຕົກລົງກັນໃນກອງປະຊຸມ CCM ຄັ້ງວັນທີ 6 ມີນາ 2020 ກ່ຽວກັບການຄັດເລືອກ SR ສໍາລັບທຶນຊ່ວຍເຫຼືອຂອງໂຄງການ RAI ໃນຮອບຕໍ່ໄປ ແລະ ໂຄງຮ່າງການຄຸ້ມຄອງໂຄງການຫັນສາ HANSA.

1. **ວາລະກອງປະຊຸມທີ 1:**

ພາຍຫຼັງທີ່ໄດ້ຮັບຟັງການສະເໜີ ຈາກຜູ້ຕາງໜ້າແຜນງານແຫ່ງຊາດ, ໃນນາມທີມງານກະກຽມ ຮ່າງບົດສະເໜີຂໍທຶນຈາກກອງທຶນໂລກເພື່ອນໍາໃຊ້ເຂົ້າໃນວຽກງານຕ້ານພະຍາດ COVID-19 ຕໍ່ກອງປະຊຸມ ແລະ ໃນທີ່ປະຊຸມໄດ້ມີຄໍາເຫັນດັ່ງລຸ່ມນີ້:

- ບົດສະເໜີຂໍທຶນຕ້ອງໃຫ້ມີການເຊື່ອມໂຍງ ແລະ ສອດຄ່ອງກັບແຜນການແຫ່ງຊາດເພື່ອກຽມພ້ອມ ແລະ ຕອບໂຕ້ຕໍ່ພະຍາດ COVID19;
- ຕ້ອງໃຫ້ມີການປະສານງານກັນເປັນຢ່າງດີ ເຊິ່ງເປັນບັນຫາທີ່ສໍາຄັນຫຼາຍ ເພື່ອຈະຫລີກລ້ຽງການຊໍ້າຊ້ອນ ແລະ ເພື່ອຮັບປະກັນປະສິດທິຜົນຂອງແຜນງານ ເພາະວ່າມີຫຼາຍແຫຼ່ງທຶນທີ່ໄດ້ສະໜັບສະໜູນລັດຖະບານໃນການກຽມພ້ອມຈັດຕັ້ງປະຕິບັດແຜນການແຫ່ງຊາດໃນການຕອບໂຕ້ພະຍາດ COVID;
- ໄລຍະເວລາການປະຕິບັດກິດຈະກໍາສະເພາະ ແລະ ອົງກອນທີ່ຈະຈັດຕັ້ງປະຕິບັດ ໄດ້ຖືກກໍານົດໄວ້ໃນຕາຕະລາງການປະຕິບັດກິດຈະກໍາຢ່າງລະອຽດແລ້ວ;
- ກິດຈະກໍາອາດຈະເລີ່ມປະຕິບັດແຕ່ຕົ້ນ ເດືອນກໍລະກົດປີ 2020 ຫາທ້າຍ ເດືອນມິຖຸນາ 2021;
- ກົມຄວບຄຸມພະຍາດຕິດຕໍ່ (CDC) ແລະ ຂະແໜງຄວບຄຸມພະຍາດຕິດຕໍ່ຂັ້ນແຂວງທັງໝົດ ແມ່ນຈຸດປະສານງານທີ່ສໍາຄັນໃນການປະສານງານ ແລະ ຈັດຕັ້ງປະຕິບັດກິດຈະກໍາກັບແຜນງານແຫ່ງຊາດ ແລະ ບັນດາຄູ່ຮ່ວມງານທີ່ກ່ຽວຂ້ອງ;
- ງົບປະມານສ່ວນໃຫຍ່ ແມ່ນໄດ້ຈັດສັນໃສ່ການໃຫ້ບໍລິການດ້ານສຸຂະພາບທີ່ຈໍາເປັນໃນລະດັບຊຸມຊົນ, ສ້າງຂີດຄວາມສາມາດໃນຂັ້ນພື້ນຖານ ແລະ ຮັບປະກັນການເຂົ້າເຖິງການບໍລິການດ້ານສຸຂະພາບ ຂອງປະຊາກອນທີ່ມີຄວາມສ່ຽງ ແລະ ປະຊາກອນເປົ້າໝາຍ, ໃຫ້ການສະໜັບສະໜູນການສົ່ງຕໍ່ຄົນເຈັບ ແລະ ການກວດເລືອດຢູ່ຂັ້ນຊຸມຊົນ, ແລະ ການສະໜັບສະໜູນຄົນເຈັບໃຫ້ໄດ້ເຂົ້າເຖິງການປິ່ນປົວ. ງົບປະມານຈໍານວນໜຶ່ງ ແມ່ນຈັດສັນເພື່ອຊື້ອຸປະກອນການແພດ ແລະ ອຸປະກອນອື່ນໆ. ບໍ່ມີງົບປະມານສໍາລັບຈັດຊື້ພາຫະນະ;
- ກ່ຽວກັບກົນໄກການໄຫຼວຽນຂອງທຶນຊ່ວຍເຫຼືອ, ອີງຕາມດໍາລັດຂອງທ່ານນາຍົກລັດຖະມົນຕີ, ສະບັບເລກທີ 504 ລົງວັນທີ 23 ເມສາ 2020, ແຫຼ່ງທຶນຊ່ວຍເຫຼືອໃໝ່ຈາກພາຍນອກທັງໝົດທີ່ສະໜັບສະໜູນການຈັດຕັ້ງປະຕິບັດແຜນການກະກຽມ ແລະ ຕອບໂຕ້ພະຍາດໂຄວິດ 19 ຂອງລັດຖະບານ ແມ່ນຕ້ອງໄດ້ຜ່ານກະຊວງການຕ່າງປະເທດ. ເນື່ອງຈາກວ່າ ກອງທຶນໂລກໄດ້ສະເໜີໃຫ້ການສະໜັບສະໜູນທຶນສຸກເສີນເພື່ອຊ່ວຍເຫຼືອບັນດາປະເທດທີ່ໄດ້ຮັບທຶນຊ່ວຍເຫຼືອໂດຍກົງຈາກກອງທຶນໂລກໃນການຕ້ານພະຍາດໂຄວິດ 19 ແລະ ຫຼຸດຜ່ອນຜົນກະທົບຕໍ່ຊີວິດຄົນເຈັບຂອງໂຄງການຕ້ານເອດໄອວີ, ວັນນະໂລກ ແລະ ໄຂ້ຍຸງ, ຜູ້ຍື່ນສະເໜີບົດສະເໜີຂໍທຶນ ຕ້ອງໄດ້ສົ່ງບົດສະເໜີໃຫ້ກອງທຶນໂລກໄວເທົ່າທີ່ຈະໄວໄດ້. ຫຼັງຈາກທີມງານກອງທຶນໂລກໄດ້ຮັບແລ້ວ ຈະທົບທວນບົດສະເໜີຂໍທຶນດັ່ງກ່າວ ແລະ ພາຍຫຼັງສໍາເລັດຂັ້ນຕອນການທົບທວນຄືນແລ້ວ ຈະດໍາເນີນການສົ່ງທຶນຊ່ວຍເຫຼືອໂດຍຜ່ານກົນໄກການໄຫຼວຽນທຶນຊ່ວຍເຫຼືອທີ່ມີຢູ່ໃນປະຈຸບັນ.
- ຄະນະກໍາມະການປະສານງານກອງທຶນໂລກທັງໝົດ 18 ທ່ານ ໄດ້ລົງຄະແນນສຽງຢ່າງເປັນເອກະສັນ ຮັບຮອງເອົາຮ່າງບົດສະເໜີຂໍທຶນຈາກກອງທຶນໂລກເພື່ອນໍາໃຊ້ເຂົ້າໃນວຽກງານຕ້ານພະຍາດ COVID-19. ບົດສະເໜີຕ້ອງໄດ້ສົ່ງໃຫ້ກອງທຶນໂລກພາຍໃນວັນທີ 31 ພຶດສະພາ 2020.

2. **ວາລະກອງປະຊຸມທີ 2:**

ພາຍຫຼັງທີ່ໄດ້ຮັບຟັງການສະເໜີ ຈາກຜູ້ຕາງໜ້າແຜນງານແຫ່ງຊາດກໍ່ຄືສູນໄຂ້ຍຸງ, ແມ່ກາຝາກ ແລະ ແມງໄມ້ (CMPE), ໃນນາມຕາງໜ້າຄະນະກຳມະການຄັດເລືອກ, ຊຶ່ງໄດ້ນຳສະເໜີຜົນຂອງການຄັດເລືອກຜູ້ຮັບທຶນຍ່ອຍ (SR) ສຳລັບການຈັດຕັ້ງປະຕິບັດທຶນຊ່ວຍເຫຼືອຈາກກອງທຶນໂລກສຳລັບໂຄງການ RAI ໃນໄລຍະປີ 2021-2023 ໃນ ສປປ ລາວ, ຜູ້ເຂົ້າຮ່ວມກອງປະຊຸມ ບໍ່ໄດ້ມີຄຳເຫັນເພີ່ມເຕີມ ແລະ ຄະນະກຳມະການປະສານງານກອງທຶນໂລກທັງໝົດ 18 ທ່ານໄດ້ເປັນເອກະພາບກັນລົງຄະແນນສຽງ ຮັບຮອງເອົາຜົນການຄັດເລືອກຜູ້ຮັບທຶນຍ່ອຍ (SR) ທີ່ຈະຈັດຕັ້ງປະຕິບັດໂຄງການ RAI ໃນຮອບວຽນອະນຸມັດການຊ່ວຍເຫຼືອຈາກກອງທຶນໂລກ ປີ 2021-2023.

3. **ວາລະກອງປະຊຸມທີ 3:**

ກອງປະຊຸມບໍ່ໄດ້ມີຄຳເຫັນເພີ່ມເຕີມ ພາຍຫຼັງທີ່ໄດ້ຮັບຟັງການສະເໜີ ຈາກຜູ້ຕາງໜ້າໜ່ວຍງານບໍລິຫານຄຸ້ມຄອງໂຄງການກອງທຶນໂລກ (PR-PMU) ຊຶ່ງໄດ້ນຳສະເໜີຜົນຂອງການທົບທວນ ແລະ ຂໍ້ແນະນຳ ຂອງຄະນະກຳມະການກວດກາດ້ານວິຊາການຂອງກອງທຶນໂລກ (TRP) ກ່ຽວກັບບົດສະເໜີຂໍທຶນຮ່ວມລະຫວ່າງແຜນງານຕ້ານເຮສໄອວີ ແລະ ວັນນະໂລກ ສຳລັບ ສປປ ລາວ ເພື່ອດຳເນີນຂັ້ນຕອນການຕົກລົງໃຫ້ທຶນຊ່ວຍເຫຼືອ.

4. ກ່ອນທີ່ຈະປິດກອງປະຊຸມ, ປະທານກອງປະຊຸມໄດ້ສະຫຼຸບສັງລວມບັນດາຈຸດສຳຄັນ ແລະ ຂໍ້ສະເໜີແນະດັ່ງລຸ່ມນີ້:
   - ຄະນະກຳມະການປະສານງານກອງທຶນໂລກໄດ້ເປັນເອກະພາບກັນຮັບຮອງເອົາບົດສະເໜີຂໍທຶນຈາກກອງທຶນໂລກເພື່ອນຳໃຊ້ເຂົ້າໃນວຽກງານຕ້ານພະຍາດ COVID-19 ແລະ ຕ້ອງໄດ້ສົ່ງບົດສະເໜີໃຫ້ກອງທຶນໂລກພາຍໃນວັນທີ 31 ພຶດສະພາ 2020;
   - ຄະນະກຳມະການປະສານງານກອງທຶນໂລກໄດ້ເປັນເອກະພາບກັນຮັບຮອງເອົາຜົນຂອງການຄັດເລືອກຜູ້ຮັບທຶນຍ່ອຍທີ່ຈະຈັດຕັ້ງປະຕິບັດໂຄງການ RAI ໃນຮອບວຽນອະນຸມັດການຊ່ວຍເຫຼືອຈາກກອງທຶນໂລກ ປີ 2021-2023;
   - ຜູ້ຕາງໜ້າໜ່ວຍງານບໍລິຫານຄຸ້ມຄອງໂຄງການກອງທຶນໂລກ (PR-PMU) ໄດ້ນຳສະເໜີຜົນຂອງການທົບທວນ ແລະ ຂໍ້ແນະນຳ ຂອງຄະນະກຳມະການກວດກາດ້ານວິຊາການຂອງກອງທຶນໂລກ (TRP) ກ່ຽວກັບບົດສະເໜີຂໍທຶນຮ່ວມລະຫວ່າງແຜນງານຕ້ານເຮສໄອວີ ແລະ ວັນນະໂລກ ສຳລັບ ສປປ ລາວ ເພື່ອດຳເນີນຂັ້ນຕອນການຕົກລົງໃຫ້ທຶນຊ່ວຍເຫຼືອ. ສະເໜີໃຫ້ PR-PMU ຕິດຕາມ ແລະ ຕອບສະໜອງຕາມຄຳແນະນຳຂອງ TRP.

ກອງປະຊຸມຄັ້ງນີ້ ໄດ້ສຳເລັດໃນເວລາ 12:00 ຂອງວັນທີ 27 ພຶດສະພາ 2020.

ນະຄອນຫຼວງວຽງຈັນ, ວັນທີ 04 ພຶດສະພາ 2020

| | |
|---|---|
| **ປະທານກອງປະຊຸມ** | **ຜູ້ສັງລວມເນື້ອໃນກອງປະຊຸມ** |
| ທ່ານ ນາງ ດຣ. ສຸລານີ ຈັນສີ | ທ່ານ ບຸດສາລີ ລັດຕະນະ |
| ຮອງຫົວໜ້າກອງສົ່ງເສີມສຸຂະພາບຊຸມຊົນ | ຜູ້ປະສານງານ ແລະ ການເງິນ |
| ອົງການກາແດງລາວ | ກອງເລຂາຄະນະກຳມະການປະສານງານກອງທຶນໂລກ |
| ຮອງປະທານຄະນະກຳມະການປະສານງານກອງທຶນໂລກ | |